ເອກະສານຂໍ້ມູນພື້ນຖານໂຄງການນີ້ແມ່ນໄດ້ຖືກແປໂດຍອີງໃສ່ຂໍ້ມູນພື້ນຖານໂຄງການທີ່ເປັນພາສາອັງກິດສະບັບຄັ້ງວັນທີ່ 22 ສິງຫາ 2018

ADB ASIAN DEVELOPMENT BANK

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ໂຄງການສົ່ງເສີມລະບົບຕ່ອງໂສ້ການຜະລິດກະສິກຳທີ່ເປັນມິດກັບແວດລ້ອມ

| | |
|---|---|
| ຊື່ໂຄງການ | ໂຄງການສົ່ງເສີມລະບົບຕ່ອງໂສ້ການຜະລິດກະສິກຳທີ່ເປັນມິດກັບສິ່ງແວດລ້ອມ |
| ລກທີ່ໂຄງການ | 48409-004 |
| ປະເທດ | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| ສະຖານະພາບໂຄງການ | ອະນຸມັດແລ້ວ |
| ປະເພດໂຄງການ/ຮູບແບບການຊ່ວຍເຫຼືອ | ໂຄງການ ຊ່ວຍເຫຼືອລ້າ |
| ແຫຼ່ງທຶນ / ມູນຄ່າ | **ໂຄງການຊ່ວຍເຫຼືອລ້າ 0585-ລາວ: ໂຄງການສົ່ງເສີມລະບົບຕ່ອງ**ການຜະລິດກະສິກຳທີ່ເປັນມິດກັບສິ່ງແວດລ້ອມ<br>ກອງທຶນພັດທະນາອາຊີ: US$ 40,50 ລ້ານ |

| | |
|---|---|
| ກຳໜົດຍຸດທະສາດ | ການຈະເລີນເຕີບໂຕຄຽງຄູ່ກັບຄວາມຍືນຍົງດ້ານສິ່ງແວດລ້ອມ<br>ການເຕີບໂຕດ້ານເສດຖະກິດທີ່ທົ່ວເຖິງ<br>ການເຊື່ອມໂຍງພາກພື້ນ |
| ປັດໃຈຂັບເຄື່ອນຕໍ່ການປ່ຽນແປງ | ການປົກຄອງບໍລິຫານ ແລະ ປັບປຸງຄວາມອາດສາມາດ<br>ການແກ້ບັນຫາໂດຍການໝູນໃຊ້ຄວາມຮູ້<br>ການພັດທະນາຂອງພາກເອກະຊົນ |
| ຂະແໜງການ /ຂະແໜງການຍ່ອຍ | **ກະສິກຳ, ຊັບພະຍາກອນທຳມະຊາດ ແລະ ພັດທະນາຊົນນະບົດ** - ນະໂຍບາຍດ້ານກະສິກຳ, ການປັບປຸງລະບົບການຈັດຕັ້ງແລະ ຄວາມອາດສາມາດ - ການຜະລິດກຳສິກຳ - ອຸດສະຫະກຳ ກະສິກຳ, ການຕະຫຼາດ ແລະ ການຄ້າ - ຊົນລະປະທານ - ໂຄງລ່າງຕະຫຼາດຊົນນະບົດ |
| ສິດສະເໝີພາບຍິງ-ຊາຍ ແລະ ການເສື່ອມສານ | ການເຊື່ອມສານສິດສະເໝີພາບຍິງ-ຊາຍທີ່ມີປະສິດທິພາບ |
| ລາຍລະອຽດ | ໂຄງການນີ້ ຈະສະໜັບສະໜູນການຈັດຕັ້ງປະຕິບັດແຜນຍຸດທະສາດ ການພັດທະນາກະສິກຳ ຮອດປີ 2025 ຂອງລັດຖະບານ ໂດຍການສົ່ງເສີມຄວາມສາມາດແຂ່ງຂັນຂອງລະບົບຕ່ອງໂສ້ການຜະລິດ ເຂົ້າ ຢູ່ໃນບັນດາແຂວງຕ່າງໆເຊັ່ນ: ຄຳມ່ວນ ສາລະວັນ ແລະ ສະຫວັນນະເຂດ ແລະພ້ອມທັງ ຕ່ອງໂສ້ການຜະລິດພືດຜັກໃນ ນະຄອນຫຼວງວຽງຈັນ ແຂວງຈຳປາສັກ ແລະ ແຂວງເຊກອງ. ໂຄງການດັ່ງກ່າວ ຈະປັບປຸງໂຄງລ່າງກະສິກຳໃຫ້ແທດເໝາະກັບ ທຸກສະພາບອາກາດ ແລະ ທັງເພີ່ມທະວີ ການຜະລິດພືດສິນຄ້າ ການຜະລິດແບບຫຼາກຫຼາຍ ແລະ ການຜະລິດເພື່ອການຄ້າ. ໂຄງການຍັງຈະຊ່ວຍປັບປຸງຂີດຄວາມສາມາດໃນການເກັບມ້ຽນ ການປຸງແຕ່ງ ຄຸນນະພາບ ແລະ ການທົດສອບຄວາມປອດໄພ ແລະພ້ອມທັງ ສົ່ງເສີມການນຳໃຊ້ປຸຍຊີວະພາບ ແລະ ກະສິກຳປອດສານພິດ. ໂຄງການຈະສ້າງຄວາມອາດສາມາດໃຫ້ຊາວກະສິກອນ ແລະ ຜູ້ປະກອບການທຸລະກິດກະສິກຳໃຫ້ເຂັ້ມແຂງ ເພື່ອສົ່ງເສີມການຜະລິດກະສິກຳໃຫ້ແທດເໝາະກັບສະພາບອາກາດ ໄປພ້ອມກັບ ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ທຸລະກິດກະສິກຳທີ່ເປັນມິດຕໍ່ສິ່ງແວດລ້ອມ ເພື່ອສົ່ງເສີມລະບົບຕ່ອງໂສ້ການຜະລິດກະສິກຳໃຫ້ມີຄວາມຍືນຍົງ. |

| | |
|---|---|
| ຄວາມເປັນມາຂອງໂຄງການ ແລະການເຊື່ອມໂຍງກັບແຜນ ຍຸດທະສາດຂອງປະເທດ / ພາກພື້ນ | ບົດລາຍງານດັດສະນີໝາຍການພັດທະນາມະນຸດ ໄດ້ຈັດລະດັບໃຫ້ ສປປ ລາວ ຢູ່ທີ່ອັນດັບ 138 ໃນຈຳນວນ 188 ປະເທດ. ໃນລະຫວ່າງປີ 1996 ຫາປີ 2016, ຄວາມໝັ້ນຄົງທາງດ້ານເສດຖະກິດມະຫາພາກແລະທາງດ້ານການເມືອງ ສາມາດເຮັດໃຫ້ ສປປ ລາວ ບັນລຸການຈະເລີນເຕີບໂຕທາງດ້ານເສດຖະກິດໃນລະດັບປານກາງທີ່ 6,5% ຕໍ່ປີ. ເຖິງຢ່າງນັ້ນກໍ່ຕາມ, ປະເທດໄດ້ປະສົບກັບ ບັນຫາຂາດດຸນບັນຊີ ເດີນສະພັດທີ່ແກ່ຍາວມາດົນ ການຫຼຸດລົງຂອງຄັງສະສົມທີ່ເປັນເງິນຕາຕ່າງປະເທດ ແລະ ການເພີ່ມຂຶ້ນຂອງໜີ້ສາທາລະນະ. ເຖິງແມ່ນວ່າ,  ການປະກອບສ່ວນຂອງຂະແໜງກະສິກຳ ຕໍ່ກັບ ຜະລິດຕະພັນພາຍໃນຕໍ່ຫົວຄົນແຫ່ງຊາດແມ່ນພວມຫຼຸດລົງ (ຈາກ 32,7% ໃນປີ 2010 ມາເປັນ 19,8% ໃນປີ 2016) ກໍ່ຕາມ ແຕ່ວ່າເສດຖະກິດກໍ່ຍັງຄົງອີງໃສ່ການຜະລິດກະສິກຳ ຊຶ່ງປະຊາກອນໃນໄວເຮັດວຽກກວມເອົາ ປະມານ 65% ຂອງປະຊາກອນ ທີ່ປະກອບອາຊີບໃນຂະແໜງການດັ່ງກ່າວ. ການຂະຫຍາຍຕົວຕໍ່າຂອງຂະແໜງການດັ່ງກ່າວ ໄດ້ສົ່ງຜົນໃຫ້ລາຍໄດ້ຂອງຄົວເຮືອນໃນເຂດຊົນນະບົດມີລະດັບທີ່ຕໍ່າ. ອັດຕາຄວາມທຸກຍາກຂອງຜູ້ທີ່ປະກອບອາຊີບໃນການຜະລິດກະສິກຳເມື່ອທຽບກັບຜູ້ທີ່ປະກອບອາຊີບໃນຂະແໜງການອື່ນ ແມ່ນມີສູງກ່ວາເກືອບປະມານສາມເທົ່າ.<br><br>ພາຍໃນປີ 2020, ລັດຖະບານໄດ້ວາງເປົ້າໝາຍເຮັດໃຫ້ອັດຕາການຂະຫຍາຍຕົວຂອງຂະແໜງກະສິກຳ ເພີ່ມຂຶ້ນ 3,4% ຕໍ່ປີ. ຂອບວຽກນະໂຍບາຍສຳລັບຂະແໜງກະສິ ກາທີ່ໄດ້ກຳໜົດໄວ້ໃນ (i) ຍຸດທະສາດການພັດທະນາກະສິກຳ ຮອດປີ 2025 (ລຸ່ມໜ້າເຈ້ຍ 1), (ii) ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີຄັ້ງທີ່ 8 (2016-2020), (iii) ຍຸດທະສາດການພັດທະນາຂະແໜງ ການປູກພືດສິນຄ້າຮອດປີ 2025 ແລະ ວິໄສທັດ 2030, ແລະ (iv) ຍຸດທະສາດການປ່ຽນແປງດິນຟ້າອາກາດຂອງ ສປປ ລາວ.  ຍຸດທະສາດການພັດທະນາກະສິກຳ ຮອດປີ 2025 ມີເປົ້າໝາຍແນໃສ່ (i) ຮັບປະກັນດ້ານສະບຽງອາຫານ, (ii) ຜະລິດສິນຄ້າກະສິກຳທີ່ສາມາດແຂ່ງຂັນບົນພື້ນຖານທ່າແຮງທີ່ມີ , (iii) ປັບປຸງການຜະລິດກະສິກຳໃຫ້ສະອາດ ປອດໄພ ແລະ ຍືນຍົງ, ແລະ (iv) ຫັນປ່ຽນເທື່ອລະກ້າວໄປສູ່ຄວາມທັນສະໄໝ ເພື່ອກ້າວໄປສູ່ເສດຖະກິດກະສິກຳທີ່ສາມາດປັບຕົວແລະມີສະມັດຕະພາບ. |
| ຜົນສະທ້ອນ | ຄວາມສາມາດແຂ່ງຂັນດ້ານກະສິກຳໄດ້ຮັບການປັບປຸງ. |

## ຜົນໄດ້ຮັບຂອງໂຄງການ

| | |
|---|---|
| ລາຍລະອຽດຂອງຜົນໄດ້ຮັບ | ລະບົບຕ່ອງໂສ້ການຜະລິດກະສິກຳ ທີ່ໃຊ້ຊັບພະຍາກອນແບບມີປະສິດທິຜົນ ໄດ້ຮັບການພັດທະນາໃນເຂດພື້ນທີ່ຂອງໂຄງການ. |
| ຄວາມຄືບໜ້າຂອງຜົນໄດ້ຮັບ | |

| ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ | |
| --- | --- |
| ລາຍລະອຽດຂອງໝາກຜົນຂອງໂຄງການ | ໂຄງລ່າງລະບົບຕ່ອງໂສ້ການຜະລິດກະສິກຳທີ່ຈຳເປັນໄດ້ຮັບການປັບປຸງ ແລະ ເຮັດໃຫ້ແທດເໝາະກັບສະພາບອາກາດ.<br><br>ການຜະລິດກະສິກຳທີ່ແທດເໝາະກັບສະພາບອາກາດ ແລະ ການເຮັດທຸລະກິດກະສິກຳໄດ້ຮັບການສົ່ງເສີມ.<br><br>ການສ້າງສະພາບແວດລ້ອມທີ່ອຳນວຍໃຫ້ແກ່ການເຮັດທຸລະກິດກະສິກຳທີ່ເປັນມິດກັບສິ່ງແວດລ້ອມໄດ້ຮັບການເສີມຂະຫຍາຍ. |
| ສະຖານະພາບຂອງຄວາມຄືບໜ້າໃນການຈັດຕັ້ງປະຕິບັດ (ຜົນໄດ້ຮັບ ກິດຈະກຳ ແລະ ບັນຫາ) | |
| ພື້ນທີ່ໂຄງການທາງພູມສາດ | ຈຳປາສັກ, ຄຳມ່ວນ, ສາລະວັນ, ສະຫວັນນະເຂດ, ເຊກອງ, ນະຄອນຫຼວງວຽງຈັນ |

| ໝວດການປົກປ້ອງ | |
| --- | --- |
| ສິ່ງແວດລ້ອມ | B |
| ການຍົກຍ້າຍຈັດສັນທີ່ບໍ່ສະໝັກໃຈ | B |
| ຄົນເຜົ່າພື້ນເມືອງ | B |

| ສະຫຼຸບຫຍໍ້ດ້ານສັງຄົມແລະສິ່ງແວດລ້ອມ |
| --- |
| ດ້ານສິ່ງແວດລ້ອມ |

| |
|---|
| ດ້ານການຍົກຍ້າຍຈັດສັນທີ່ບໍ່ສະໝັກໃຈ |
| ດ້ານຄົນເຜົ່າພື້ນເມືອງ |

**ການສື່ສານ ການເຂົ້າຮ່ວມ ແລະ ການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ**

| |
|---|
| ໃນໄລຍະອອກແບບໂຄງການ |
| ໃນໄລຍະຈັດຕັ້ງປະຕິບັດໂຄງການ |

| | |
|---|---|
| ຜູ້ຮັບຜິດຊອບໂຄງການຝ່າຍເອດີບີ | Ancha, Srinivasan |
| ກົມຮັບຜິດຊອບໂຄງການຝ່າຍ ເອດີບີ | ກົມອາຊີຕາເວັນອອກສຽງໃຕ້ |
| ພະແນກຮັບຜິດຊອບໂຄງການຝ່າຍເອດີບີ | ພະແນກສິ່ງແວດລ້ອມ ຊັບພະຍາກອນທຳມະຊາດ ແລະ ກະສິກຳ, ກົມອາຊີອາເວັນອອກສຽງໃຕ້ |
| ໜ່ວຍງານຮັບຜິດຊອບໂຄງການຝ່າຍລັດຖະບານ | ກະຊວງກະສິກຳແລະປ່າໄມ້, ກົມສົ່ງເສີມເຕັກນິກແລະປຸງແຕ່ງກະສິກຳ<br>ບ້ານດອນໃຕ້ ເມືອງໄຊທານີ ນະຄອນຫຼວງວຽງຈັນ<br>ກະຊວງກະສິກຳແລະປ່າໄມ້, ກົມຊົນລະປະທານ<br>ຕູ້ໄປສະນີເລກທີ່ 5192, ຖະໜົນເຈົ້າອານຸ ນະຄອນຫຼວງວຽງຈັນ<br><br>ກະຊວງກະສິກຳແລະປ່າໄມ້ - ກົມແຜນການແລະການເງິນ<br>ຖະໜົນລ້ານຊ້າງ, ເຂດປະຕູໄຊ<br>ຕູ້ໄປສະນີເລກທີ່ 811 ນະຄອນຫຼວງວຽງຈັນ |

| ຕາຕະລາງໂຄງການ | |
|---|---|
| ການຜ່ານຮູບແບບຂອງໂຄງການ | 12 ພຶດສະພາ 2015 |
| ການລົງເກັບກຳຕົວຈິງ | 16 ພະຈິກ 2017 ຫາ 23 ພະຈິກ 2017 |
| ການລົງທົບທວນແລະຕິດຕາມກວດກາ | 13 ເມສາ 2018 |
| ການອະນຸມັດ | 30 ກໍລະກົດ 2018 |
| ລົງທົບທວນໂຄງການຄັ້ງສຸດທ້າຍ | - |
| ປັບປຸງຂໍ້ມູນພື້ນຖານໂຄງການຄັ້ງສຸດທ້າຍ | 17 ສິງຫາ 2018 |

**ໂຄງການຊ່ວຍເຫຼືອລ້າເລກທີ່ 0585-ລາວ**

| ເຫດການທີ່ສຳຄັນ | | | | | |
|---|---|---|---|---|---|
| ອະນຸມັດ | ວັນທີ່ເຊັນສັນຍາ | ວັນທີ່ມີຜົນສັກສິດ | ການປິດໂຄງການ | | |
| | | | ກຳໜົດ | ປັບປຸງ | ຕົວຈິງ |
| 30 ກໍລະກົດ 2018 | - | - | 31 ມີນາ 2025 | - | - |

| ແຜນການເງິນ | | ການນຳໃຊ້ເງິນໂຄງການ | | | |
|---|---|---|---|---|---|
| | ລວມທັງໝົດ (ມູນຄ່າເປັນ US$ ລ້ານ) | ວັນທີ່ | ເອດີບີ | ພາກສ່ວນອື່ນ | ເປີເຊັນສຸດທິ |
| ມູນຄ່າໂຄງການ | 46,37 | ການອະນຸມັດສັນຍາສະສົມ | | | |
| ເອດີບີ | 40,50 | 30 ກໍລະກົດ 2018 | 0,00 | 0,00 | 0% |
| ຄູ່ຮ່ວມ | 5,87 | ການເບີກ-ຈ່າຍສະສົມ | | | |
| ການປະກອບທຶນສົມທົບ | 0,00 | 30 Jul 2018 | 0,00 | 0,00 | 0% |

ຂໍ້ມູນພື້ນຖານໂຄງການໄດ້ບັນຈຸແຕ່ຂໍ້ມູນໂດຍຫຍໍ້ ກ່ຽວກັບ ໂຄງການຫຼືແຜນງານ: ເນື່ອງຈາກວ່າ ຂໍ້ມູນພື້ນຖານໂຄງການໄດ້ບັນຈຸຂໍ້ມູນຂອງວຽກໂຄງການທີ່ພວມດຳເນີນ, ບາງຂໍ້ມູນອາດຈະບໍ່ໄດ້ເອົາບັນຈຸເຂົ້າໃນສະບັບເບື້ອງຕົ້ນຂອງຂໍ້ມູນພື້ນຖານໂຄງການ ແຕ່ວ່າຈະໄດ້ເອົາຕື່ມເຂົ້າໃສ່ ພາຍຫຼັງທີ່ມີຂໍ້ມູນເພີ່ມເຕີມ. ຂໍ້ມູນກ່ຽວກັບ ໂຄງການທີ່ພວມນຳສະເໜີ ແມ່ນຍັງບໍ່ທັນຄົບຖ້ວນ ແລະ ມີໃຫ້ໄດ້ຕາມທີ່ລະບຸໄວ້.
ເອດີບີ ສະໜອງຂໍ້ມູນທີ່ໄດ້ຖືກບັນຈຸເຂົ້າໃນຂໍ້ມູນພື້ນຖານນີ້ພຽງແຕ່ເອກະສານດຽວ ຊຶ່ງເອກະສານດັ່ງກ່າວນີ້ ຖືວ່າເປັນແຫຼ່ງຂໍ້ມູນໂຄງການ ສະໜອງໃຫ້ແກ່ຜູ້ປະສົງນຳໃຊ້ຂໍ້ມູນໂຄງການດັ່ງກ່າວ ໂດຍບໍ່ຕ້ອງໄດ້ຮັບອະນຸຍາດກ່ອນການນຳໃຊ້. ໃນຂະນະທີ່ ເອດີບີ ພະຍາຍາມທີ່ຈະສະຫນອງເນື້ອຫາທີ່ມີຄຸນນະພາບສູງ, ຂໍ້ມູນທີ່ສະຫນອງ "ຕາມນີ້" ໂດຍບໍ່ມີການຮັບປະກັນໃດໆ, ທັງການສະແດງອອກ ຫຼື ຖືກບັງຄັບ ລວມທັງ ບໍ່ມີການຮັບປະກັນດ້ານການຄ້າ, ຄວາມສອດຄ່ອງກັບຈຸດປະສົງສະເພາະໃດຫນຶ່ງ ແລະ ທັງບໍ່ມີການລະເມີດ. ເອດີບີ ເວົ້າສະເພາະແລ້ວ ຈະບໍ່ຄໍ້າປະກັນ ຫຼື ເປັນຕົວແທນໃດໆທີ່ ກ່ຽວຂ້ອງກັບ ຄວາມຖືກຕ້ອງ ຫຼື ຄົບຖ້ວນສົມບູນຂອງຂໍ້ມູນດັ່ງກ່າວນີ້.